International Labour Organization



# ເຄື່ອງມືສຳລັບການຝຶກອົບຮົບ ການປົກປ້ອງສັງຄົມ ໃນ ສປປລາວ

*ປະກອບດ້ວຍ ຄູ່ມືການຝຶກອົບຮົມ, ເອກະສານ ແລະ ຊຸດບົດຮຽນ*





International
Labour
Organization



# ຂໍ້ມູນກ່ຽວກັບຄູ່ມືການຝຶກອົບຮົມ

International
Labour
Organization



# ຄູ່ມືການຝຶກອົບຮົມ

ແມ່ນຖືກອອກແບບມາເພື່ອ:

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອົງການປະກັນສັງຄົມແຫ່ງຊາດ

ຫ້ອງການປະກັນສຸຂະພາບແຫ່ງຊາດ

ສະຖາບັນການສຶກສາ

ອົງການຈັດຕັ້ງທາງສັງຄົມ

ຄູ່ຮ່ວມພັດທະນາ

# ຄູ່ມືການຝຶກອົບຮົມ

ອອກແບບມາສຳລັບຜູ້ທີ່ໄດ້ຮັບການຝຶກ:

- ເພື່ອໃຫ້ເຂົ້າໃຈວ່າການປົກປ້ອງສັງຄົມແມ່ນຫຍັງ ແລະ ເພື່ອທຳຄວາມຄຸ້ນເຄີຍກັບແນວຄວາມຄິດຫຼັກທີ່ກ່ຽວກັບການປົກປ້ອງສັງຄົມ.
- ເພື່ອຮຽນຮູ້ວ່າການປົກປ້ອງສັງຄົມແມ່ນຈະຖືກອອກແບບ ແລະ ຈັດຕັ້ງປະຕິບັດແນວໃດ
- ເພື່ອສ້າງຄວາມຄຸ້ນເຄີຍກັບເຄື່ອງມືສຳຄັນຂອງການປົກປ້ອງສັງຄົມ

# ຄູ່ມືການຝຶກອົບຮົມ: ຫຼັກສູດ

ຫຼັກສູດ 1 – ຫຼັກສູດພື້ນຖານຂອງການປົກປ້ອງສັງຄົມ

ຫຼັກສູດ 2 - ກອບແຜນການຂອງການປົກປ້ອງສັງຄົມແຫ່ງຊາດ ຢູ່ ສປປ ລາວ

ຫຼັກສູດ 3 - ຫຼັກສູດການຝຶກອົບຮົມທີ່ຊ່ວຍເສີມສ້າງທັກສະຂອງຜູ້ເຂົ້າຮ່ວມ ແລະ ສ້າງຄວາມໝັ້ນໃຈໃນການອໍານວຍຄວາມສະດວກການຝຶກອົບຮົມ

# ເປົ້າໝາຍຜູ້ເຂົ້າຮ່ວມ

International Labour Organization

| ເປົ້າໝາຍຜູ້ເຂົ້າຮ່ວມ | ຈຸດປະສົງ/ການນຳໃຊ້ຄູ່ມືການຝຶກອົບຮົມ | ວິທີອອກແບບການຝຶກອົບຮົມ |
|---|---|---|
| **ພາກລັດ** | ຝຶກອົບຮົມອຳນາດການປົກຄອງແຂວງ ເພື່ອວາງແຜນໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ລະບົບປົກປ້ອງສັງຄົມ | ການສົນທະນາດ້ານວິຊາການເພີ່ມເຕີມໂດຍໃຊ້ຊຸດບົດຮຽນຈາກຫຼັກສູດ1–2;<br><br>ການຝຶກອົບຮົມຕໍ່ເນື່ອງ,ບໍ່ຕໍ່ເນື່ອງ ໄລຍະ 1-2 ມື້ |
| **ອົງການຈັດຕັ້ງທາງສັງຄົມ** | ດັດປັບໃຫ້ເຂົ້າກັບການຝຶກອົບຮົມໃນທ້ອງຖິ່ນ / ບ້ານ / ຊຸມຊົນຂອງເຂົາເຈົ້າ<br><br>ເພີ່ມທະວີຄວາມເຂົ້າໃຈກ່ຽວກັບຄູ່ຮ່ວມງານອົງການຈັດຕັ້ງສັງຄົມໃນທ້ອງຖິ່ນ/ຜູ້ຈັດຕັ້ງປະຕິບັດ<br><br>ການໂຄສະນາເພື່ອອອກແບບລະບົບສະເພາະໃດໜຶ່ງ ຫຼືສິດທິໃດໜຶ່ງທີ່ຈຳເປັນຢູ່ໃນທ້ອງຖິ່ນຂອງເຂົາເຈົ້າ | ການຝຶກອົບຮົມຫຼາຍວັນ, ເຊິ່ງອຳນວຍຄວາມສະດວກໃຫ້ແກ່ການສ້າງທີມງານ ເນື່ອງຈາກວ່າການຝຶກອົບຮົມຈະໃຫ້ຜູ້ເຂົ້າຮ່ວມໄດ້ມີເວລາໃນການແລກປ່ຽນແນວຄວາມຄິດຕໍ່ກັບຫົວຂໍ້ການຝຶກອົບຮົມ.ນີ້ຈະຊ່ວຍໃຫ້ບຸກຄົນໄດ້ມີການພັດທະນາຕົນເອງ, ແລະ ຜູ້ເຂົ້າຮ່ວມກໍຈະໄດ້ຊ່ວຍເຫືອເຊິ່ງກັນ ແລະ ກັນ. |
| **ຄູ່ຮ່ວມພັດທະນາ** | ໃຊ້ສຳລັບກິດຈະກຳການສ້າງຄວາມອາດສາມາດເຊິ່ງເປັນສ່ວນຫນຶ່ງຂອງການອອກແບບຫຼືການຈັດຕັ້ງປະຕິບັດນະໂຍບາຍ | ສາມາດເປັນການຝຶກອົບຮົມແບບບໍ່ຕໍ່ເນື່ອງຫຼືຫຼາຍມື້ |

# ຕາຕະລາງການຝຶກອົບຮົມໂດຍລວມ

| | ພາກນຳສະເໜີ | | |
|---|---|---|---|
| 35 ນາທີ | 10 ນາທີ | ທຳຄວາມຮູ້ຈັກເຊິ່ງກັນ ແລະ ກັນ | ກິດຈະກຳ 1, ເອກະສານ 1 |
| | 25 ນາທີ | ກົດລະບຽບ ແລະ ຄວາມຄາດຫວັງ | ກິດຈະກຳ 2 |

| | ຫຼັກສູດ 1: ການນຳສະເໜີກ່ຽວກັບການປົກປ້ອງສັງຄົມ | | |
|---|---|---|---|
| 60 ນາທີ | **ພາກທີ1: ຄວາມສ່ຽງ ແລະ ກົນໄກການຮັບມືຢູ່ໃນຊຸມຊົນ**<br>ພາກນີ້ຈະໄດ້ຄົ້ນຄວ້າຄຳຖາມ ເປັນຫຍັງການປົກປ້ອງສັງຄົມຈຶ່ງມີຄວາມສຳຄັນຕໍ່ປະຊາຊົນລາວ | | |
| | 60 ນາທີ | ກຳນົດຄວາມສ່ຽງ ແລະ ແນວທາງການແກ້ໄຂບັນຫາທີ່ເກີດໃນຊຸມຊົນ | ກິດຈະກຳ 3, ເອກະສານ 2 |
| | *ຕໍ່ໄປ: ພາກທີ 2* | | |

International Labour Organization

| | ຫຼັກສູດ 1: ການນຳສະເໜີກ່ຽວກັບການປົກປ້ອງສັງຄົມ | | |
|---|---|---|---|
| 45 ນາທີ | **ພາກທີ 2: ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ**<br>• ສຳຫຼວດຫາວິທີທີ່ລະບົບປົກປ້ອງສັງຄົມຈະຊ່ວຍຕອບສະໜອງຄວາມຕ້ອງການຂອງປະຊາຊົນລາວ<br>• ສຳຫຼວດຫາຄວາມໝາຍຂອງການປົກປ້ອງສັງຄົມ<br>• ສຳຫຼວດຫາຄວາມໝາຍຂອງວົງຈອນຊີວິດຕໍ່ກັບວິທີການໃນການປົກປ້ອງສັງຄົມ | | |
| | 30 ນາທີ | ນຳສະເໜີກ່ຽວກັບ:<br>• ການປົກປ້ອງສັງຄົມ<br>• ມາດຕະຖານສາກົນຕໍ່ກັບການປົກປ້ອງສັງຄົມ ແລະ ການປົກປ້ອງສັງຄົມຂັ້ນພື້ນຖານ<br>• ວິທີການແບບ "ຂັ້ນໄດ" ແມ່ນຫຍັງ<br>• ການປົກປ້ງສັງຄົມໃນເປົ້າໝາຍການພັດທະນາແບບຍືນຍົງ | |
| | 15 ນາທີ | ຫຼິ້ນເກມ ຄຳສັບ ແລະ ຄວາມໝາຍ | ກິດຈະກຳ 4 |
| *ຕໍ່ໄປ: ພາກທີ 3* | | | |

International Labour Organization

| | ຫຼັກສູດ 1: ການນຳສະເໜີກ່ຽວກັບການປົກປ້ອງສັງຄົມ | | |
|---|---|---|---|
| 65 ນາທີ | **ພາກທີ 3: ລະບົບປົກປ້ອງສັງຄົມ ໃນ ສປປ ລາວ**<br>ພາກນີ້ແມ່ນແນໃສ່ການເລີ່ມຕົ້ນສ້າງແຜນພາບຄວາມຕ້ອງການການປົກປ້ອງສັງຄົມຢູ່ໃນປະເທດ | | |
| | 20 ນາທີ | ສ້າງແຜນພາບຂອງການປົກປ້ອງສັງຄົມໃນ ສປປ ລາວ | ກິດຈະກຳ 5, ເອກະສານ 3 |
| | 30 ນາທີ | ລະບົບປົກປ້ອງສັງຄົມໃນ ສປປ ລາວ (ອີງຕາມຜົນຂອງ ABND ແລະ ຂໍ້ມູນການປົກປ້ອງສັງຄົມໃນທ້ອງຖິ່ນ) | |
| | 15 ນາທີ | ແມ່ນໃຜຢາກເປັນເສດຖີ? | ກິດຈະກຳ 6 |

*ຕໍ່ໄປ: ພາກທີ 4*

International Labour Organization

| | ຫຼັກສູດ 1: ການນຳສະເໜີກ່ຽວກັບການປົກປ້ອງສັງຄົມ | | |
|---|---|---|---|
| 45ນາທີ | **ພາກທີ 4: ບົດບາດຂອງການປົກປ້ອງສັງຄົມ**<br>ພາກນີ້ແມ່ນມີຈຸດປະສົງເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມເຂົ້າໃຈວ່າເປັນຫຍັງການປົກປ້ອງສັງຄົມຈຶ່ງມີຄວາມສຳຄັນ | | |
| | 15 ນາທີ | ຄວາມເຊື່ອທີ່ຜິດ ຫຼື ຄວາມຈິງ? | ກິດຈະກຳ 7 |
| | 30 ນາທີ | ກໍລະນີສຶກສາ: ໂຄງການອຸດໜູນເດັກຢູ່ປະເທດໄທ | |

*ຕໍ່ໄປ: ພາກທີ 5*

International Labour Organization

| | ຫຼັກສູດ 1: ການນຳສະເໜີກ່ຽວກັບການປົກປ້ອງສັງຄົມ | | |
|---|---|---|---|
| 120 ນາທີ | **ພາກທີ 5. ວິທີການກຳໜົດເປົ້າໝາຍ**<br>ຮຽນຮູ້ກ່ຽວກັບອົງປະກອບທີ່ສຳຄັນຂອງການປົກປ້ອງສັງຄົມ, ໂດຍສະເພາະການໃຫ້ເງິນອຸດໜູນເປັນເງິນສົດ | | |
| | 60 ນາທີ | ຄວາມເຂົ້າໃຈກ່ຽວກັບຄວາມສັບຊ້ອນຂອງການກຳໜົດເປົ້າໝາຍ | ກິດຈະກຳ 8, ເອກະສານ 4 |
| | 30 ນາທີ | ບັນຍາຍກ່ຽວກັບວິທີການກຳນົດເປົ້າໝາຍ ແລະກໍລະນີສຶກສາ ກ່ຽວກັບເງິນບຳນານສຳລັບຜູ້ສູງອາຍຸໃນຟີລິບປິນ | |
| | 30 ນາທີ | ການປົກປ້ອງສັງຄົມແບບກຳນົດເປົ້າໝາຍ | ກິດຈະກຳ 9 |

*ຕໍ່ໄປ: ພາກທີ 6 & 7*

International Labour Organization

| | ຫຼັກສູດ 1: ການນຳສະເໜີກ່ຽວກັບການປົກປ້ອງສັງຄົມ | | |
|---|---|---|---|
| 60 ນາທີ | **ພາກທີ 6: ປະເພດຂອງການປົກປ້ອງສັງຄົມ** | | |
| | 30 ນາທີ | ແບບມີເງື່ອນໄຂ vs. ແບບບໍ່ມີເງື່ອນໄຂ | ກິດຈະກຳ 10 |
| | 30 ນາທີ | ກໍລະນີສຶກສາ:<br>• ການຈ່າຍເງິນອຸດໜູນໃຫ້ແມ່ ແລະ ເດັກນ້ອຍ<br>• ການຈ່າຍເງິນອຸດໜູນແບບມີເງື່ອນໄຂສຳລັບໂຄງການສຶກສາ (CCTE) | |
| 30 ນາທີ | **ພາກທີ 7: ການລວບລວມຄວາມເຂົ້າໃຈກ່ຽວກັບການປົກປ້ອງສັງຄົມ** | | |
| | 30 ນາທີ | "ຜູ້ທີ່ມັກສິ່ງໃສ" ແລະ "ຜູ້ທີ່ເຊື່ອ" | ກິດຈະກຳ 11 |
| | *ຕໍ່ໄປ: ຫຼັກສູດ 2 – ພາກທີ 1* | | |

| | ຫຼັກສູດ 2: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ | | |
|---|---|---|---|
| 75 ນາທີ | **ພາກທີ 1: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ**<br>ເພື່ອໃຫ້ຮຽນຮູ້ກ່ຽວກັບ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດລາວ | | |
| | 45 ນາທີ | ການສ້າງແຜນທີ່ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕໍ່ກັບການປົກປ້ອງສັງຄົມທີ່ມີຢູ່ໃນຂັ້ນແຂວງ | ກິດຈະກຳ 12 |
| | 30 ນາທີ | ບົດນຳສະເໜີ: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (ໂດຍລວມ) | |

*ຕໍ່ໄປ: ຫຼັກສູດ 2 – ພາກທີ 2 & 3*

International Labour Organization

| | ຫຼັກສູດ 2: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ | | |
|---|---|---|---|
| 60 ນາທີ | **ພາກທີ 2: ການລົງທຶນໃສ່ລະບົບປົກປ້ອງສັງຄົມ**<br>ສຳຫຼວດທາງເລືອກຂອງການລົງທຶນໃສ່ລະບົບປົກປ້ອງສັງຄົມຂອງປະເທດອື່ນ, ພ້ອມທັງນຳສະເໜີຕົວຢ່າງ. | | |
| | 30 ນາທີ | ບັນຍາຍກ່ຽວກັບການລົງທຶນໃສ່ລະບົບປົກປ້ອງສັງຄົມ | |
| | 30 ນາທີ | ກິດຈະກຳ ສາມ “A” ການຂະຫຍາຍງົບປະມານ | ກິດຈະກຳ 13, ເອກະສານ 5 |
| 30 ນາທີ | **ພາກທີ 3: ບາດກ້າວຕໍ່ໄປຂອງຍຸດທະສາດການປົກປ້ອງສັງຄົມ** | | |
| | 30 ນາທີ | ການຈັດຕັ້ງປະຕິບັດລະບົບປົກປ້ອງສັງຄົມໃນຂັ້ນແຂວງ | ກິດຈະກຳ 14 |
| | *ຕໍ່ໄປ: ຫຼັກສູດ 3 - ພາກທີ 1,2 & 3* | | |

International Labour Organization

| ຫຼັກສູດ 3: ການກະກຽມ ແລະ ການອຳນວຍຄວາມສະດວກ | | | |
|---|---|---|---|
| | 30 ນາທີ | ພາກທີ 1: ບົດບາດຂອງຜູ້ອຳນວຍຄວາມສະດວກ | |
| | 30 ນາທີ | ພາກທີ 2: ເຕັກນິກໃນການອຳນວຍຄວາມສະດວກ | |
| | 45 ນາທີ | ພາກທີ 3: ສິ່ງທ້າທາຍທີ່ຜູ້ອຳນວຍຄວາມສະດວກພົບພໍ້ | |
| | 90 ນາທີ | ພາກທີ 4: ການກະກຽມ ແລະ ການວາງແຜນ | |

# ພາກແນະນຳໂຕ

## ກິດຈະກຳ1: ທຳຄວາມຮູ້ຈັກເຊິ່ງກັນ ແລະ ກັນ

| | | |
|---|---|---|
| | **ຂັ້ນຕອນ:** | 1. ບອກຜູ້ເຂົ້າຮ່ວມຊອກຫາຜູ້ທີ່ມີຄຸນລັກສະນະກົງກັນກັບຢູ່ເອກະສານ 1 ແລະ ຂຽນຊື່ຂອງບຸກຄົນນັ້ນໃສ່ຫ້ອງດັ່ງກ່າວ.<br>2. ຜູ້ເຂົ້າຮ່ວມຕ້ອງຂຽນຊື່ຂອງ 5 ຄົນໃສ່ຫ້ອງທາງຂວາງ, ທາງຕັ້ງ, ຫຼື.ທາງຕັດ<br>3. ບອກຜູ້ເຂົ້າຮ່ວມໃຫ້ຮ້ອງ ບິງໂກ້ ເມື່ອພວກເຂົາໄດ້ຕື່ມ 5 ແຖວ/ ຫ້ອງ ຄົບຖ້ວນ. |
| | **ບັນທຶກຂອງຜູ້ອຳນວຍຄວາມສະດວກ** | ຫຼັງຈາກ10 ນາທີ ໃຫ້ສຳຫຼວດກິດຈະກຳເຖິງແມ່ນວ່າຜູ້ເຂົ້າຮ່ວມເຮັດກິດຈະກຳບໍ່ແລ້ວກໍຕາມ. ໃຫ້ເນັ້ນໜັກວ່າ ຄຸນລັກສະນະເຫຼົ່ານີ້ສ່ວນຫຼາຍແມ່ນກ່ຽວຂ້ອງກັບການປົກປ້ອງສັງຄົມ, ໂດຍສະເພາະແມ່ນຄວາມສ່ຽງຕໍ່ຊີວິດ, ສະຖານະການ, ແລະ ກົນໄກການຮັບມື. |

# ກິດຈະກຳ 1: ທຳຄວາມຮູ້ຈັກເຊິ່ງກັນ ແລະ ກັນ



International Labour Organization

## ກິດຈະກຳ 2: ກົດລະບຽບ ແລະ ຄວາມຄາດຫວັງ

| | | |
|---|---|---|
| | **ຂັ້ນຕອນ:** | 1. ແບ່ງຜູ້ເຂົ້າຮ່ວມອອກເປັນສາມກຸ່ມ<br>2. ຢາຍເຈ້ຍແຜ່ນໃຫຍ່ໃຫ້ແຕ່ລະກຸ່ມ<br>3. ບອກຜູ້ເຂົ້າຮ່ວມຂຽນຄວາມຄາດຫວັງໃນການຝຶກອົບຮົມອີງຕາມຫົວຂໍ້ທີ່ເຂົາເຈົ້າໄດ້ຮັບ. ໃຫ້ເວລາ 5 ນາທີ<br>4. ຫລັງຈາກ 5 ນາທີ, ກຸ່ມຈະໄດ້ຍ້າຍໄປຫາເຈ້ຍແຜ່ນຕໍ່ໄປ. ເຂົາເຈົ້າຈະໄດ້ອ່ານສິ່ງທີ່ກຸ່ມຜ່ານມາໄດ້ຂຽນລົງ ແລະ ຕື່ມຄວາມຄາດຫວັງຂອງເຂົາເຈົ້າໃສ່. ເຂົາເຈົ້າອາດຈະເຫັນດີກັບສິ່ງທີ່ກຸ່ມຜ່ານມາຂຽນລົງ. ໃຊ້ເວລາ 5 ນາທີເຊັ່ນກັນ<br>5. ຂັ້ນຕອນນີ້ກໍເຮັດຄືເກົ່າເປັນເທື່ອທີສາມ ຈົນກວ່າໝົດທຸກກຸ່ມໄວ້ໝູນວຽນກັນຂຽນໃສ່ເຈ້ຍ ສາມແຜ່ນ. |

International Labour Organization

## ກິດຈະກຳ 2: ກົດລະບຽບ ແລະ ຄວາມຄາດຫວັງ

| | | |
|---|---|---|
| | **ຂັ້ນຕອນ:** | 6. ຫລັງຈາກໝູນວຽນກັນສາມຄັ້ງແລ້ວ, ຜູ້ອຳນວຍຄວາມສະດວກຈະອ່ານສິ່ງທີ່ທາງກຸ່ມໄດ້ຂຽນ. ຜູ້ອຳນວຍຄວາມສະດວກຈະໄດ້ເນັ້ນໃຫ້ຜູ້ເຂົ້າຮ່ວມຊາບວ່າ ຄວາມຄາດຫວັງໃດທີ່ຈະໄດ້ບັນລຸ. ໂດຍອີງໃສ່ຄວາມຄາດຫວັງຂອງຜູ້ເຂົ້າຮ່ວມ ແລະ ພ້ອມກັບການຊ່ວຍເຫຼືອ ແລະ ການຕົກລົງເປັນເອກະພາບຂອງຜູ້ເຂົ້າຮ່ວມ, ຜູ້ອຳນວຍຄວາມສະດວກຈະໄດ້ສະຫລຸບສັງລວມບັນດາກົດລະບຽບທີ່ໄດ້ຂຽນມາໃສ່ໃນເຈ້ຍຕ່າງຫາກ “ ກົດລະບຽບໃນການຝຶກອົບຮົມ”<br>7. ຕິດເຈ້ຍເຫລົ່ານັ້ນໄວ້ບ່ອນທີ່ທຸກຄົນສາມາດໄປເບິ່ງຄືນໄດ້ ແລະ ຖືເອົາເປັນບ່ອນອ້າງອີງໃຫ້ແກ່ການຝຶກອົບຮົມທັງໝົດ |

International Labour Organization

## ກິດຈະກຳ 2: ກົດລະບຽບ ແລະ ຄວາມຄາດຫວັງ

| | | |
|---|---|---|
| | ບັນທຶກຂອງຜູ້ອຳນວຍຄວາມສະດວກ | ນຳພາຜູ້ເຂົ້າຮ່ວມໃນເວລາໝູນວຽນຂຽນໃສ່ເຈ້ຍ. ຮັບປະກັນວ່າທຸກຄົນມີສ່ວນຮ່ວມ. ສິ່ງສຳຄັນກໍຄື ກົດລະບຽບຂອງການຝຶກອົບຮົມຕ້ອງມາຈາກຜູ້ເຂົ້າຮ່ວມເອງ ແລະ ໄດ້ຕົກລົງເຫັນດີນຳກັນ. ຍົກຕົວຢ່າງໃຫ້ຜູ້ເຂົ້າຮ່ວມ ຖ້າເຂົາເຈົ້າບໍ່ເຂົ້າໃຈ:<br>**ເນື້ອໃນ/ວິທີການ**<br>• ມ່ວນຊື່ນ ແລະ ມີການປະກອບສ່ວນ<br>• ໄດ້ມີເວລາພັກຜ່ອນພຽງພໍ<br>• ມີກິດຈະກຳສ້າງບັນຍາກາດຫຼາຍ<br><br>**ຜູ້ອຳນວຍຄວາມສະດວກໃນການຝຶກອົບຮົມ/ຜູ້ນຳສະເໜີບົດ**<br>• ມີຄວາມຮູ້<br>• ເວົ້າຈະແຈ້ງ<br>• ຫ້າວຫັນກະຕືລືລົ້ນ<br>**ຜູ້ເຂົ້າຮ່ວມ**<br>• ເວົ້າເທື່ອລະຄົນ<br>• ບໍ່ໃຊ້ໂທລະສັບມືຖືໃນເວລາຝຶກອົບຮົມ |

International
Labour
Organization



# ກິດຈະກຳ 2: ກົດລະບຽບ ແລະ ຄວາມຄາດຫວັງ



# - ຈົບ -